**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ນາຍົກລັດຖະມົນຕີ</u>

ເລກທີ 64 /ນຍ

ວຽງຈັນ, ວັນທີ.....[illegible].04.2003

# ດຳລັດ

## ຂອງນາຍົກລັດຖະມົນຕີ ວ່າດ້ວຍພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະຄຸ້ມຄອງການລົງທຶນ ຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນ ຂັ້ນສູນກາງ ແລະ ທ້ອງຖິ່ນ.

- ອີງຕາມກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕ່າງປະເທດ ສະບັບ ເລກທີ 01/94, ລົງວັນທີ 14 ມີນາ 1994,
- ອີງຕາມກົດໝາຍ ວ່າດ້ວຍການສົ່ງເສີມ ການລົງທຶນພາຍໃນ ສະບັບເລກທີ 03/95/ສພຊ, ລົງວັນທີ 14 ຕຸລາ 1995,
- ອີງຕາມດຳລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງ ຄະນະຄຸ້ມຄອງການລົງທຶນ ຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນ ສະບັບເລກທີ 118/ນຍ, ລົງວັນທີ 25 ມິຖຸນາ 2001,

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**

**ອອກດຳລັດ :**

## <u>ໝວດທີ I</u>

## <u>ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ຂອງ ຄະນະຄຸ້ມຄອງ ການລົງທຶນ ຮ່ວມມືກັບຕ່າງປະເທດ ແລະລົງທຶນພາຍໃນ</u>

<u>ມາດຕາ 1:</u> <u>ທີ່ຕັ້ງ</u>

ຄະນະຄຸ້ມຄອງການລົງທຶນ ຮ່ວມມືກັບຕ່າງປະເທດ ແລະລົງທຶນພາຍໃນ ຊຶ່ງຂຽນດ້ວຍຕົວອັກສອນຫຍໍ້ວ່າ " **ຄລຂ** " ແມ່ນອົງການຄຸ້ມຄອງລັດ ຂັ້ນສູນກາງ ທີ່ສ້າງຕັ້ງຂຶ້ນ

ໂດຍດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 118/ນຍ, ລົງວັນທີ 25/6/01 ແລະ ປ່ຽນແທນ ຄະນະກຳມະການຄຸ້ມຄອງການລົງທຶນຕ່າງປະເທດ ໃນເມື່ອກ່ອນ.

<u>ມາດຕາ 2</u>: ພາລະບົດບາດ ໜ້າທີ່

" ຄລຮ " ເຄື່ອນໄຫວ ພາຍໃຕ້ການເປັນປະທານ ຂອງປະທານຄະນະກຳມະການແຜນການ ແລະ ການຮ່ວມມື ຊຶ່ງແມ່ນປະທານ ຂອງ "ຄລຮ" ໂດຍຕຳແໜ່ງ ແລະ ປະຕິບັດຕາມພາລະບົດບາດ, ໜ້າທີ່ເປັນເສນາທິການ ໃຫ້ແກ່ລັດຖະບານ ແຫ່ງ ສປປ ລາວ ດັ່ງນີ້ :

2.1 ຄລຮ ເປັນໃຈກາງ ພິຈາລະນາ ໃຫ້ການບໍລິການ, ອະນຸຍາດ ແລະ ຄຸ້ມຄອງລວມສູນຜ່ານປະຕູດຽວ ກ່ຽວກັບວຽກງານການລົງທຶນ ແລະ ຮ່ວມມືກັບຕ່າງປະເທດ,

2.2 ຄົ້ນຄວ້າ ຍຸດທະສາດ, ນະໂຍບາຍ ວ່າດ້ວຍການສົ່ງເສີມ ແລະ ດຶງດູດການລົງທຶນຂອງພາຍໃນ ແລະຕ່າງປະເທດ ເພື່ອສະເໜີລັດຖະບານ ພິຈາລະນາຮັບຮອງ, ພ້ອມທັງໂຄສະນາ ເຜີຍແຜ່ ແນວທາງນະໂຍບາຍດັ່ງກ່າວ, ສະໜອງ ຂໍ້ມູນຂ່າວສານ ແລະ ສ້າງສິ່ງແວດລ້ອມ ທີ່ເອື້ອອຳນວຍ ໃຫ້ແກ່ການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ.

2.3 ຄົ້ນຄວ້າ ຍຸດທະສາດ, ນະໂຍບາຍ, ທິດທາງ ແລະ ແຜນການຮ່ວມມືເສດຖະກິດກັບຕ່າງປະເທດ ໃນແຕ່ລະໄລຍະ ເພື່ອສະເໜີ ລັດຖະບານພິຈາລະນາ ແລະ ຮັບຮອງເອົາ; ພາຍຫຼັງທີ່ລັດຖະບານຮັບຮອງເອົາແລ້ວ ເປັນເຈົ້າການ ໃນການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການປຶກສາຫາລືກັບຕ່າງປະເທດ ແລ້ວລາຍງານໃຫ້ລັດຖະບານ ຕົກລົງ;

2.4 ພິຈາລະນາ ແລະ ຕົກລົງອະນຸມັດ ຕາມຂັ້ນຕອນ ແລະ ລະບຽບການ ພ້ອມທັງອອກລະບອບ ລະບຽບການຕ່າງໆ ກ່ຽວກັບໂຄງການ ຂໍອະນຸຍາດລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ, ໂຄງ ການຊ່ວຍເຫຼືອລ້າ ແລະ ກູ້ຢືມ ໃຫ້ເປັນລະບົບ ທີ່ຈະແຈ້ງ, ຊັດເຈນ, ສະດວກ, ວ່ອງໄວ ແລະ ຮັດກຸມ ຕາມຫຼັກການ ຜ່ານປະຕູດຽວ. ພ້ອມດຽວກັນນັ້ນ ກໍ່ຄົ້ນຄວ້າທຸກວິທີການ ເພື່ອອຳນວຍຄວາມສະດວກ ແລະ ແກ້ໄຂຂໍ້ຫຍຸ້ງຍາກ ຫຼື ສິ່ງກີດຂວາງ ຕໍ່ການລົງທຶນ ແລະ ການຮ່ວມມືກັບຕ່າງປະເທດ ບົນພື້ນຖານ ໃຫ້ສອດຄ່ອງກັບ ກົດໝາຍທີ່ໄດ້ວາງໄວ້;

2.5 ໂຄສະນາເຜີຍແຜ່ ປຸກລະດົມຂົນຂວາຍ ແລະ ແນະນຳກ່ຽວກັບນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ທີ່ພົວພັນເຖິງວຽກງານການລົງທຶນ ແລະ ຮ່ວມມືເສດຖະກິດກັບຕ່າງປະເທດ ຢູ່ ສປປ ລາວ ໃນຂະແໜງການຕ່າງໆ;

2.6 ເກັບກຳ ແລະ ວິໄຈຂໍ້ມູນ ເພື່ອຮັບໃຊ້ໃຫ້ແກ່ ການວາງແຜນລົງທຶນ ແລະ ຮ່ວມມືເສດຖະກິດກັບຕ່າງປະເທດ ໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຕາມແນວທາງນະໂຍບາຍ ພັດທະນາເສດຖະກິດ-ສັງຄົມ ທີ່ກຳນົດໂດຍລັດຖະບານ ໃນແຕ່ລະໄລຍະ;

2.7 ຊີ້ນຳ ແລະ ປະສານສົມທົບ ກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອ

ຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ, ຂໍ້ກຳນົດ, ລະບອບວິທີເຮັດວຽກ ແລະ ລະບຽບການປະສານງານ ລະຫວ່າງ " **ຄລຮ** " ກັບພາກສ່ວນຕ່າງໆ ໃຫ້ນັບມື້ນັບດີຂື້ນ;

2.8 ອຳນວຍຄວາມສະດວກ, ຕິດຕາມກວດກາ, ຊຸກຍູ້, ປະເມີນຜົນ ແລະ ສະເໜີວິທີທາງແກ້ໄຂບັນຫາ ການຈັດຕັ້ງປະຕິບັດ ບັນດາໂຄງການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ແລະ ໂຄງການຮ່ວມມືເສດຖະກິດ ກັບຕ່າງປະເທດ ຊຶ່ງລັດຖະບານ ໄດ້ອະນຸມັດແລ້ວໃຫ້ມີປະສິດທິຜົນ;

2.9 ຈັດກອງປະຊຸມປະຈຳປີ ຂອງ ຄລຮ ເພື່ອສະຫຼຸບ ຖອດຖອນບົດຮຽນ ແລະ ປຶກສາຫາລື ກັບຜູ້ລົງທຶນ ພາຍໃນ ແລະ ຕ່າງປະເທດ ແລະ ຜູ້ໃຫ້ການຊ່ວຍເຫຼືອ ແລະ ກູ້ຢືມ ແກ່ ສ ປ ປ ລາວ;

2.10 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງ ລັດຖະບານ.

## <u>ໝວດທີ II</u>

## ໂຄງປະກອບການຈັດຕັ້ງ ແລະ ກິ່ງຈັກຊ່ວຍວຽກ ຂອງ "ຄລຮ"

<u>ມາດຕາ 3:</u> ໂຄງປະກອບການຈັດຕັ້ງຂອງ "**ຄລຮ**" ມີຢູ່ ສອງຂັ້ນຄື:

ກ) <u>"ຄລຮ" ຂັ້ນສູນກາງປະກອບມີ:</u>

1. ປະທານ ຄະນະກຳມະການແຜນການ ແລະ ການຮ່ວມມື ເປັນປະທານ ໂດຍຕຳແໜ່ງ;
2. ບັນດາຮອງປະທານ ຄະນະກຳມະການແຜນການ ແລະ ການຮ່ວມມື, ຜູ້ຮັບຜິດຊອບ ວຽກງານລົງທຶນພາຍໃນ ແລະ ຕ່າງປະເທດ, ແລະ ຜູ້ຮັບຜິດຊອບ ວຽກງານຮ່ວມມື ກັບຕ່າງປະເທດ ເປັນຮອງປະທານ ໂດຍຕຳແໜ່ງ;
3. ຮອງປະທານ ຄະນະກຳມະການແຜນການ ແລະ ການຮ່ວມມື ຜູ້ອື່ນໆ ເປັນກຳມະການ ໂດຍຕຳແໜ່ງ.

ຂ). <u>"ຄລຮ" ຂັ້ນທ້ອງຖິ່ນ ( ແຂວງ, ກຳແພງນະຄອນ, ເຂດພິເສດ ) ປະກອບມີ:</u>

1. ເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ, ຫົວໜ້າເຂດພິເສດ ເປັນປະທານ ໂດຍຕຳແໜ່ງ;
2. ຮອງເຈົ້າແຂວງ, ຮອງເຈົ້າຄອງກຳແພງນະຄອນ, ຮອງຫົວໜ້າເຂດພິເສດ ຜູ້ຊີ້ນຳວຽກງານເສດຖະກິດ ເປັນຮອງປະທານ ໂດຍຕຳແໜ່ງ;
3. ຮອງເຈົ້າແຂວງ, ຮອງເຈົ້າຄອງກຳແພງນະຄອນ, ຮອງຫົວໜ້າເຂດພິເສດ ຜູ້ອື່ນໆ ເປັນກຳມະການ ໂດຍຕຳແໜ່ງ;

<u>ມາດຕາ 4</u>: ກົງຈັກຊ່ວຍວຽກຂອງ " **ຄລຮ** " ຂັ້ນສູນກາງ ແລະ ທ້ອງຖິ່ນ.

4.1. <u>ຄະນະຄຸ້ມຄອງການລົງທຶນ ຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນ ມີກົງຈັກຊ່ວຍວຽກດັ່ງນີ້:</u>

- <u>ຢູ່ຂັ້ນສູນກາງ :</u>

1. ກົມສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ;
2. ກົມຮ່ວມມືເສດຖະກິດ ກັບຕ່າງປະເທດ;
3. ຫ້ອງການ ຄຜຮ ເປັນກອງເລຂາ " **ຄລຮ** " ຂັ້ນສູນກາງ.

- <u>ຢູ່ຂັ້ນທ້ອງຖິ່ນ :</u>

- ພະແນກແຜນການ ແລະ ການຮ່ວມມື ຂອງແຂວງ, ກຳແພງນະຄອນ ແລະເຂດພິເສດ ເປັນກອງເລຂາ " **ຄລຮ** " ຂັ້ນທ້ອງຖິ່ນ.

4.2. <u>ພາລະບົດບາດ, ໜ້າທີ່ ຂອງ ກອງເລຂາ" ຄລຮ" ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ:</u>

- ກະກຽມ ວາລະປະຊຸມສາມັນ ແລະ ວິສາມັນ ຂອງ "ຄລຮ" ໃນຂັ້ນຂອງຕົນພ້ອມດ້ວຍເອກະສານອື່ນໆ ທີ່ຈຳເປັນເພື່ອນຳສະເໜີປະທານ "ຄລຮ" ເປີດກອງປະຊຸມ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 8 ຂອງດຳລັດສະບັບນີ້;
- ຮ່າງບົດບັນທຶກ ກ່ຽວກັບການຕົກລົງ ຂອງກອງປະຊຸມ "ຄລຮ" ເພື່ອນຳສະເໜີ ຂໍລາຍເຊັນປະທານ ຫຼື ຮອງປະທານ "ຄລຮ" ເຊັນຕາມລະບຽບການ ແລ້ວນຳສົ່ງໃຫ້ ພາກສ່ວນທີ່ກ່ຽວຂ້ອງ;
- ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ມະຕິຕົກລົງຕ່າງໆ ຂອງກອງປະຊຸມ "ຄລຮ";
- ປະຕິບັດໜ້າທີ່ວຽກງານອື່ນໆ ຕາມການມອບໝາຍ ຂອງ "ຄລຮ" .

ສ່ວນພາລະບົດບາດໜ້າທີ່ ລະອຽດຂອງກອງເລຂາ "ຄລຮ" ແຕ່ລະຂັ້ນແມ່ນມອບໃຫ້ປະທານ "ຄລຮ" ແຕ່ລະຂັ້ນເປັນຜູ້ກຳນົດອອກຕ່າງຫາກຖ້າເຫັນວ່າມີຄວາມຈຳເປັນ.

4.3 <u>ພາລະບົດບາດ ຂອງກະຊວງ ຂະແໜງການກ່ຽວຂ້ອງກັບວຽກງານລົງທຶນ ຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນ:</u>

ບັນດາກະຊວງຂະແໜງການຕ່າງໆ ຕ້ອງແຕ່ງຕັ້ງ ພະນັກງານວິຊາການຂອງຕົນ ຂັ້ນພະແນກຂຶ້ນໄປ ຈຳນວນໜຶ່ງ ເພື່ອຮັບຜິດຊອບ ຕິດຕາມວຽກງານການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ, ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ທີ່ມີສ່ວນກ່ຽວຂ້ອງ ກັບຂະແໜງການຂອງຕົນ. ພະນັກງານດັ່ງກ່າວ ມີໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ, ບັນດາລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບວຽກງານ ການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ແລະ ການຮ່ວມມືເສດຖະກິດກັບຕ່າງປະເທດ ທີ່ກ່ຽວຂ້ອງກັບຂະແໜງການຂອງຕົນ ໃຫ້ສອດຄ່ອງກັບລະບຽບການທີ່ "ຄລຮ" ວາງອອກ ແລະ ສອດຄ່ອງກັບກົດໝາຍທີ່ປະກາດໃຊ້ ໃນປັດຈຸບັນ;
2. ເຜີຍແຜ່ຂໍ້ມູນຂ່າວສານ ລະບຽບຫຼັກການ, ຂົນຂວາຍ ໂຄສະນາດຶງດູດ ຍາດແຍ່ງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ, ການຊ່ວຍເຫຼືອລ້າ ແລະ ກູ້ຢືມເຂົ້າໃສ່ຂະແໜງການຂອງຕົນ ໃຫ້ນັບມື້ນັບຫຼາຍຂຶ້ນ;
3. ຮັບຜິດຊອບ ເກັບກຳຂໍ້ມູນລະອຽດ, ຄົ້ນຄ້ວາປະກອບຄຳເຫັນ ທາງດ້ານວິຊາການ ຢ່າງຕັ້ງໜ້າເຂົ້າໃນບັນດາໂຄງການ, ຮ່າງສັນຍາຕ່າງໆ ຂອງການລົງທຶນ ຂອງຕ່າງປະເທດ ແລະ ການຮ່ວມມື

ເສດຖະກິດກັບຕ່າງປະເທດ ແລ້ວນຳສະເໜີໃຫ້ເຈົ້າກະຊວງຂອງຕົນ ເພື່ອມີຄຳເຫັນເປັນລາຍລັກອັກສອນໃຫ້ "ຄລຮ" ເພື່ອເປັນບ່ອນອີງໃນການພິຈາລະນາ ອະນຸມັດໂຄງການ;

4. ເຂົ້າຮ່ວມກອງປະຊຸມ ວິຊາການ ຫລື ກອງປະຊຸມ "ຄລຮ" ເພື່ອຄົ້ນຄວ້າໂຄງການ ທີ່ມີສ່ວນກ່ຽວຂ້ອງ ກັບຂະແໜງການຂອງຕົນ;
5. ເປັນຂໍ້ຕໍ່ລະຫວ່າງ ຂະແໜງການຂອງຕົນກັບ " ຄລຮ " ໂດຍດຳເນີນການເຄື່ອນໄຫວ ພາຍໃຕ້ການຊີ້ນຳຈາກ ລັດຖະມົນຕີຂອງຕົນ ແລະ ລາຍງານຄືນສະພາບ ການເຄື່ອນໄຫວວຽກງານ ແລະ ບັນຫາຕ່າງໆ ໃຫ້ລັດຖະມົນຕີ ຂອງຕົນ ຢ່າງເປັນປະຈຳ;
6. ຄົ້ນຄ້ວາ, ປະກອບຄຳເຫັນ ແລະ ນຳສະເໜີວິທີການປັບປຸງ ເພື່ອເຮັດໃຫ້ ການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ການຮ່ວມມືເສດຖະກິດກັບຕ່າງປະເທດ ໄດ້ຮັບການປະຕິບັດ ຢ່າງມີປະສິດທິຜົນດີ;
7. ຕິດຕາມ, ກວດກາ, ສະຫຼຸບ, ຕີລາຄາ ການຈັດຕັ້ງປະຕິບັດໂຄງການ ໃນຂະແໜງການ ຂອງຕົນ ທີ່ໄດ້ອະນຸມັດໄປແລ້ວ ແລະ ປະກອບເປັນບົດລາຍງານສະຫຼຸບ ການປະຕິບັດແຜນການ ແລະໂຄງການລົງທຶນຂອງພາຍໃນ ແລະຕ່າງປະເທດ ແລະໂຄງການຮ່ວມມືກັບຕ່າງປະເທດ ໃນແຕ່ລະໄລຍະ;
8. ຕິດຕາມ ການຈັດຕັ້ງປະຕິບັດ ຂໍ້ຕົກລົງ ແລະ ມາດຕາການຕ່າງໆຂອງ "ຄລຮ" ກ່ຽວກັບຂະແໜງການຂອງຕົນ.

## <u>ໝວດທີ III</u>

## ສິດຂອງ "ຄລຮ" ແຕ່ລະຂັ້ນ ແລະ ສິດ ຂອງກະຊວງ, ຂະແໜງການ ທີ່ກ່ຽວຂ້ອງ

<u>ມາດຕາ 5:</u> " ຄລຮ " ຂັ້ນສູນກາງ ມີສິດດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ພິຈາລະນາ ທຸກບັນຫາກ່ຽວກັບການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ, ການຮ່ວມມື ກັບຕ່າງປະເທດ ໃນຂອບເຂດທົ່ວປະເທດ;
2. <u>ຕົກລົງອະນຸມັດ:</u>

- ໂຄງການລົງທຶນ ຂອງຕ່າງປະເທດ ທີ່ນອນຢູ່ໃນບັນຊີສົ່ງເສີມ ຊຶ່ງມີມູນຄ່າການລົງທຶນ ນັບແຕ່ 10.000.000 $ (ສິບລ້ານ) ໂດລາສະຫະລັດ ລົງມາ;
- ອອກໃບສົ່ງເສີມການລົງທຶນພາຍໃນ ສຳລັບໂຄງການລົງທຶນພາຍໃນ ທີ່ມີມູນຄ່າ ນັບແຕ່ 100 (ໜຶ່ງຮ້ອຍ) ຕື້ ກີບ ລົງມາ.
- ສ່ວນໂຄງການລົງທຶນ ຂອງຕ່າງປະເທດ ແລະໂຄງການລົງທຶນພາຍໃນ ທີ່ທ້ອງຖິ່ນ ມີສິດອະນຸຍາດຕາມເນື້ອໃນຈິດໃຈທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້, ຜູ້ລົງທຶນສາມາດ

ເລືອກທີ່ຈະຂໍອະນຸຍາດລົງທຶນຕ່າງປະເທດ ຫຼືຂໍໃບສົ່ງເສີມການລົງທຶນພາຍໃນ ນຳ "ຄລຮ" ຂັ້ນສູນກາງ ຫຼື ທ້ອງຖິ່ນ ກໍ່ໄດ້ ຕາມທີ່ຜູ້ລົງທຶນເຫັນວ່າ ມີຄວາມສະດວກ.

- ບັນດາໂຄງການຊ່ວຍເຫຼືອລ້າ ຈາກຕ່າງປະເທດ ເຊິ່ງຈະໄດ້ກຳນົດອອກສະເພາະ ໃນລະບຽບການ ກ່ຽວກັບການຄຸ້ມຄອງການຊ່ວຍເຫລືອລ້າ ແລະການກູ້ຢືມ;

ສ່ວນໂຄງການຂໍອະນຸຍາດລົງທຶນຕ່າງປະເທດ ທີ່ມີມູນຄ່າ ນັບແຕ່ 10.000.000 $ (ສິບລ້ານ)ໂດລາສະຫະລັດ ຂຶ້ນໄປ ຫລື ໂຄງການລົງທຶນພາຍໃນ ທີ່ມີມູນຄ່າ ນັບແຕ່ 100 (ໜຶ່ງຮ້ອຍ) ຕື້ກີບ ຂຶ້ນໄປ ແລະ/ຫຼື ເປັນໂຄງການ ທີ່ຕິດພັນ ກັບການຂໍສຳປະທານສິດ ແລະ ຊັບພະຍາກອນ ທຳມະຊາດ ພາຍຫຼັງທີ່ກອງປະຊຸມ "ຄລຮ" ໄດ້ພິຈາລະນາເຫັນດີແລ້ວ ແມ່ນຈະໄດ້ນຳສະເໜີ ຂໍອະນຸມັດ ນຳລັດຖະບານ ຕາມຄວາມເໝາະສົມ ຂອງໂຄງການ.

3. <u>ເຊັນໃບອະນຸຍາດ ລົງທຶນ:</u>

ພາຍຫຼັງທີ່ໂຄງການໄດ້ຜ່ານການພິຈາລະນາ ອະນຸມັດເຫັນດີ ຈາກ ກອງປະຊຸມ ຄລຮ ຂັ້ນສູນກາງແລ້ວ:

- ປະທານ ຄລຮ ມີສິດເຊັນໂຄງການລົງທຶນ ທີ່ມີມູນຄ່າ ນັບແຕ່ 5 ລ້ານໂດລາສະຫາລັດຂຶ້ນໄປ;
- ຮອງປະທານ ຄລຮ ຜູ້ຊີ້ນຳວຽກງານການລົງທຶນພາຍໃນ ແລະ ຕ່າງປະເທດ ມີສິດເຊັນໂຄງການລົງທຶນ ທີ່ມີມູນຄ່າ ນັບແຕ່ 5 (ຫ້າ) ລ້ານໂດລາສະຫະລັດ ລົງມາ.

4. ນຳສະເໜີ ຂັ້ນເທິງພິຈາລະນາອະນຸມັດ ແລະມອບສິດໃຫ້ເຊັນບົດບັນທຶກຄວາມເຂົ້າໃຈ, ສັນຍາ ຫຼື ອະນຸສັນຍາປະເພດຕ່າງໆ ກັບຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ຫຼື ຜູ້ໃຫ້ການຊ່ວຍເຫຼືອລ້າ ຕາມລະບຽບການ.
5. ກວດກາ, ດັດແກ້, ຊຸກຍູ້ ບັນດາໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ໂຄງການຮ່ວມມືກັບຕ່າງ ປະເທດ ໃຫ້ຖືກຕ້ອງຕາມສັນຍາ ແລະ ລະບຽບກົດໝາຍ. ຖ້າຫາກໂຄງການໃດບໍ່ມີປະສິດທິຜົນ ກໍມີສິດຮຽກມາປຶກສາ, ເຈລະຈາ ແລະ ແກ້ໄຂກັບເຈົ້າຂອງໂຄງການ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ ຕາມສັນຍາ ແລະ ລະບຽບກົດໝາຍທີ່ມີຢູ່;
6. ປະສານສົມທົບ ກັບທຸກພາກສ່ວນ ທີ່ກ່ຽວຂ້ອງເປັນຕົ້ນ ປະສານສົມທົບ ກັບບັນດາກະຊວງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດ ໂຄງການຕ່າງໆ ທີ່ໄດ້ອະນຸມັດແລ້ວ ໃຫ້ສຳເລັດຜົນ;
7. ເປັນເຈົ້າການ ແລະເຂົ້າຮ່ວມໃນການປະກອບຄຳເຫັນ, ປຶກສາຫາລື, ຄົ້ນຄວ້າ ຮ່າງລະບຽບກົດໝາຍ ທີ່ພົວພັນເຖິງການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ການຮ່ວມມື ກັບຕ່າງປະເທດ.

<u>ມາດຕາ 6</u>: "ຄລຮ" ຂັ້ນທ້ອງຖິ່ນ ( ຂັ້ນແຂວງ, ກຳແພງນະຄອນ ແລະ ເຂດພິເສດ ) ມີສິດດັ່ງນີ້:

1. <u>ຕົກລົງອະນຸມັດ</u>:
   - ໂຄງການລົງທຶນ ຂອງຕ່າງປະເທດ ທີ່ຢູ່ໃນບັນຊີກິດຈະການສົ່ງເສີມຕາມທີ່ໄດ້ລະບຸໄວ້ໃນດຳລັດຂອງນາຍົກລັດຖະມົນຕີ ເລກທີ46/ນຍ, ລົງວັນທີ 23/03/2001 ແລະມີມູນຄ່າ ນັບແຕ່ 1.000.000 (ໜຶ່ງລ້ານ)ໂດລາສະຫະລັດ ລົງມາ ແລະ ອອກໃບສົ່ງເສີມການລົງທຶນ

ພາຍໃນສຳລັບໂຄງການລົງທຶນພາຍໃນທີ່ມີມູນຄ່າ ການລົງທຶນ ນັບແຕ່10.000.000.000 (ສິບຕື້)ກີບ ລົງມາ.

- ສະເພາະ 4 ແຂວງ ເຊັ່ນ : ກຳແພງນະຄອນວຽງຈັນ, ສະຫວັນນະເຂດ, ຈຳປາສັກ ແລະ ຫລວງພະບາງ ມີສິດຕົກລົງອະນຸມັດໂຄງການລົງທຶນຕ່າງປະເທດ ທີ່ຢູ່ໃນບັນຊີກິດຈະການສົ່ງເສີມ ແລະມີມູນຄ່າການລົງທຶນ ນັບແຕ່ 2.000.000 (ສອງລ້ານ) ໂດລາສະຫະລັດ ລົງມາ ແລະອອກໃບສົ່ງເສີມການລົງທຶນພາຍໃນ ສຳລັບໂຄງການລົງທຶນພາຍໃນທີ່ມີມູນຄ່າ ການລົງທຶນນັບແຕ່ 20 (ຊາວຕື້)ກີບ ລົງມາ.

2. ເຊັນໃບອະນຸຍາດລົງທຶນ/ໃບສົ່ງເສີມການລົງທຶນພາຍໃນ

ປະທານ ຄລຮ ຂັ້ນທ້ອງຖິ່ນມີສິດເຊັນໃບອະນຸຍາດລົງທຶນ/ໃບສົ່ງເສີມການລົງທຶນພາຍໃນ ຂັ້ນທ້ອງຖິ່ນຕາມມູນຄ່າທຶນທີ່ໄດ້ລະບຸ ໄວ້ໃນຂໍ້ 1 ເທິງນີ້, ຫລັງຈາກນັ້ນຕ້ອງສົ່ງສຳເນົາໃບອະນຸຍາດລົງທຶນ/ໃບສົ່ງເສີມການລົງທຶນພາຍໃນດັ່ງກ່າວໃຫ້ " ຄລຮ " ຂັ້ນສູນກາງພາຍໃນກຳນົດເວລາ 5 ວັນລັດຖະການ;

3. ຄຸ້ມຄອງໂດຍກົງ ກ່ຽວກັບບັນດາ ໂຄງການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ, ແລະ ໂຄງການຮ່ວມມື ກັບຕ່າງປະເທດ ທີ່ປະຕິບັດຢູ່ທ້ອງຖິ່ນ ຂອງຕົນ ແລະ ລາຍງານຢ່າງເປັນປົກກະຕິໃຫ້ແກ່ "ຄລຮ" ຂັ້ນສູນກາງ ກ່ຽວກັບການຕິດຕາມສະພາບ ຂອງໂຄງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ແລະ ໂຄງການຮ່ວມມື ກັບຕ່າງປະເທດ;

4. ຄົ້ນຄວ້າປະກອບຄຳເຫັນໃສ່ໂຄງການລົງທຶນພາຍໃນ ແລະຕ່າງປະເທດ ທີ່ບໍ່ນອນຢູ່ໃນຂອບເຂດສິດອະນຸມັດຂອງຕົນໃຫ້ " ຄລຮ " ຂັ້ນສູນກາງພິຈາລະນາອະນຸມັດ;

5. ຕິດຕາມ, ກວດກາ, ຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດ ໂຄງການລົງທຶນຂອງພາຍໃນ ຕ່າງປະເທດ ແລະໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ແລະ ສະຫຼຸບ ລາຍງານ ຕີລາຄາການຈັດຕັ້ງປະຕິບັດ ພ້ອມທັງຂຶ້ນແຜນການວຽກດັ່ງກ່າວໃນ ແຕ່ລະໄລຍະໃຫ້ "ຄລຮ" ຂັ້ນ ສູນກາງເປັນປົກກະຕິ,

<u>ມາດຕາ 7</u>: ກະຊວງ ຂະແໜງການກ່ຽວຂ້ອງ ມີສິດດັ່ງນີ້:

1. ສຶກສາ ຄົ້ນຄ້ວາ ກ່ຽວກັບແຜນການ ແລະ ຍຸດທະສາດ ໃນການດຶງດູດ ການລົງທຶນ ແລະ ການຮ່ວມມື ໃນຂະແໜງການ ຂອງຕົນ ເພື່ອນຳສະເໜີຕໍ່ "ຄລຮ" ພິຈາລະນາ ຮັບຮອງເອົາແລ້ວໄປຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ;

2. ປະສານສົມທົບ ແລະ ອອກຄຳຄິດຄຳເຫັນ ທາງດ້ານວິຊາການ ເພື່ອໃຫ້ "ຄລຮ" ພິຈາລະນາ ຕົກລົງອະນຸມັດ ຫຼື ປະຕິເສດ ໂຄງການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ ແລະ ໂຄງການຮ່ວມມື ກັບຕ່າງປະເທດ ຕາມລະບຽບກົດໝາຍ;

3. ຂົນຂວາຍ, ໂຄສະນາດຶງດູດ ການລົງທຶນ ແລະ ການຮ່ວມມື ໃນຂະແໜງການ ຂອງຕົນ ໃຫ້ນັບມື້ນັບເພີ່ມຂຶ້ນ;

4. ຕິດຕາມ ກວດກາ ແລະ ຄຸ້ມຄອງບັນດາໂຄງການ ທີ່ນອນຢູ່ໃນຂະແໜງການຂອງຕົນຕາມພາ

ລະບົດບາດຄຸ້ມຄອງຕາມຂະແໜງການ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ກັບລະບຽບກົດໝາຍ ທີ່ວາງອອກ, ພ້ອມທັງປະສານງານ ຢ່າງໃກ້ຊິດກັບ "ຄລຮ" ໃນການໃຫ້ຂໍ້ມູນ ແລະ ລາຍງານສະພາບ ຢ່າງປົກກະຕິ.

## ໝວດທີ IV

## ລະບອບວິທີເຮັດວຽກ

ມາດຕາ 8: ກອງປະຊຸມ "ຄລຮ".

1. ກອງປະຊຸມ "ຄລຮ" ຈັດຂຶ້ນ ເພື່ອປຶກສາ ແລະ ຕົກລົງບັນຫາສຳຄັນ ຂອງການລົງທຶນ ແລະ ຮ່ວມມື, ຊຶ່ງໂດຍປົກກະຕິນັ້ນ ແມ່ນ ເດືອນລະສອງຄັ້ງ ຫຼື ຖ້າຈຳເປັນ ກໍ່ອາດຈັດເພີ່ມ ຫຼາຍຄັ້ງກໍ່ໄດ້;
2. ປະທານ "ຄລຮ" ເປັນຜູ້ຕົກລົງ ຮຽກປະຊຸມ ແລະ ເປັນປະທານກອງປະຊຸມ, ໃນເມື່ອປະທານຕິດທຸລະ ຫຼື ບໍ່ຢູ່ ກໍ່ອາດມອບໃຫ້ ຮອງປະທານ ຮຽກປະຊຸມ ແລະ ເປັນປະທານກອງປະຊຸມໄດ້;
3. ກອງປະຊຸມ "ຄລຮ" ພິຈາລະນາ ແລະ ຕົກລົງບັນຫາດັ່ງນີ້:

- ຮັບຟັງການລາຍງານ ສະພາບການຈັດຕັ້ງປະຕິບັດ ໂຄງການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ ແລະ ໂຄງການຮ່ວມມື ກັບ ຕ່າງປະເທດ;
- ພິຈາລະນາ ແລະ ຕົກລົງອະນຸມັດ ໂຄງການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ ແລະ ໂຄງການຮ່ວມມືກັບ ຕ່າງປະເທດ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 5 ແລະ 6 ຂອງດຳລັດສະບັບນີ້;
- ປຶກສາ ແລະ ແກ້ໄຂບັນຫາລວມ ກ່ຽວກັບການສົ່ງເສີມ ແລະ ປົກປ້ອງ ການລົງທຶນ ຂອງພາຍໃນ ແລະ ຕ່າງປະເທດ ແລະ ວຽກງານຮ່ວມມື ກັບຕ່າງປະເທດ.

## ໝວດທີ V

## ບົດບັນຍັດສຸດທ້າຍ

ມາດຕາ 9: ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ຄະນະກຳມະການ ແລະ ອົງການທຽບເທົ່າ, ແຂວງ, ກຳແພງ, ເຂດພິເສດ ມີໜ້າທີ່ປະສານສົມທົບຢ່າງແໜ້ນແຟ້ນ ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ມາດຕາ 10: ດຳລັດສະບັບນີ້ ໃຊ້ແທນ ຂໍ້ຕົກລົງ ເລກທີ 28/ນຍ, ລົງວັນທີ 18/08/2000 ແລະ ຄຳສັ່ງແນະນຳ ເລກທີ 013/ນຍ, ລົງວັນ 20/10/2000. ດຳລັດສະບັບນີ້ ມີຜົນບັງຄັບໃຊ້ 30 ວັນ ຫລັງຈາກ ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຂໍ້ຕົກລົງໃນເມື່ອກ່ອນ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ

ບຸນຍັງ ວໍລະຈິດ